ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY

ບົດລາຍງານປະຈຳປີ 2018

ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 256 259

❖ ປະຫວັດຄວາມເປັນມາ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ຕໍ່ໄປນີ້ເອີ້ນວ່າ: “ບໍລິສັດ”) ໄດ້ສ້າງຕັ້ງຂຶ້ນໃນວັນທີ 29 ກໍລະກົດ 2008, ອີງຕາມໃບອະນຸຍາດລົງທຶນພາຍໃນ ສະບັບເລກທີ 077/ຄລທ.ນວ ໃນຮູບແບບບໍລິສັດ ຈຳກັດ ຜູ່ດຽວ ໂດຍມີຄົນລາວຖືຮຸ້ນ 100 (ໜຶ່ງຮ້ອຍ) ສ່ວນຮ້ອຍ ດ້ວຍທຶນຈົດທະບຽນ 100,000 (ໜຶ່ງແສນໂດລາ) ໂດລາ ສະຫະລັດ ດຳເນີນທຸລະກິດໃຫ້ບໍລິການດ້ານກະສິກຳແບບຄົບວົງຈອນ ຊຶ່ງກວມເອົານັບຕັ້ງແຕ່ການກໍ່ສ້າງຟາມ, ການ ກ້າເບ້ຍ ແລະ ການປູກ.



<u>ໂຮງຜະລິດເບ້ຍປາມ, ເມັດງອກ ແລະ ເບ້ຍປາມເພື່ອຈຳໜ່າຍ</u>

ວັນທີ 04 ພຶດສະພາ 2012 ບໍລິສັດໄດ້ເພີ່ມທຶນຈົດທະບຽນມາເປັນ 5,000,000,000 (ຫ້າຕື້) ກີບ ໂດຍໄດ້ຮັບອະນຸຍາດດຳເນີນທຸລະກິດເພີ່ມເຕີມຄື: ປະເພດອຸດສະຫະກຳປຸງແຕ່ງຜະລິດນ້ຳມັນປາມຄົບວົງຈອນ ເປັນຕົ້ນແມ່ນການສ້າງໂຮງງານແປຮູບຜົນຜະລິດຈາກຕົ້ນປາມນ້ຳມັນ, ໂຮງງານຝຸ່ນຊີວະພາບ, ໂຮງງານຜະລິດນ້ຳມັນກະຊວນຊີວະພາບ, ໂຮງງານອັດຮ່າຍນ້ຳມັນຜຶດ ອີງຕາມໃບທະບຽນວິສາຫະກິດ ສະບັບເລກທີ 0932/ຈທວ.




ຜົນຜະລິດເມັດປາມຈາກສວນປາມ ແລະ ຮັບຊື້ຈາກລູກສວນ

ໃນວັນທີ 28 ສິງຫາ 2013 ບໍລິສັດໄດ້ມີການເພີ່ມທຶນຈົດທະບຽນມາເປັນ 40,000,000,000 (ສີ່ສິບຕື້) ກີບ ແລະ ປ່ຽນແປງຮູບແບບບໍລິສັດຈາກບໍລິສັດຈຳກັດຜູ້ດຽວມາເປັນຮູບແບບບໍລິສັດຈຳກັດ, ໄດ້ຮັບອະນຸຍາດດຳເນີນທຸລະກິດເພີ່ມເຕີມຄື: ນຳເຂົ້າ-ສົ່ງອອກ ແລະ ຈຳໜ່າຍແນວພັນຜຶດ, ເບ້ຍໄມ້ກະສິກຳທຸກຊະນິດ ແລະ ຜົນຜະລິດກະສິກຳທຸກຊະນິດ, ນຳເຂົ້າ-ສົ່ງອອກ ແລະ ຈຳໜ່າຍສະບຽງອາຫານ ແລະ ເຄື່ອງດື່ມ, ນຳເຂົ້າວັດສະດຸກໍ່ສ້າງກຽວກັບການສ້າງຕັ້ງໂຮງງານອຸດສະຫະກຳ ແລະ ກະສິກຳ, ນຳເຂົ້າເຄື່ອງຈັກປັນຈຸນ້ຳມັນຜຶດ ເຄື່ອງຈັກສະກັດນ້ຳມັນຈາກໃບຕາເວັນ, ປາມ, ເຄື່ອງຈັກອື່ນທີ່ກ່ຽວຂ້ອງກັບກາຊວນຊີວະພາບເພື່ອຮັບໃຊ້ໂຮງງານ, ຝຸ່ນເຄມີ ແລະ ຫົວເຊື້ອເພື່ອນຳໃຊ້ເປັນສ່ວນປະກອບຜະລິດຝຸ່ນຊີວະພາບ ອີງຕາມໃບທະບຽນວິສາຫະກິດ ສະບັບເລກທີ 0919/ຈທວ, ໂດຍການຖືຄອງຮຸ້ນຈາກນັກທຸລະກິດລາວແມ່ນ ທ່ານ ບຸນມາ ຈັນທະວົງ ຈຳນວນ 41 (ສີ່ສິບເອັດ) ສ່ວນຮ້ອຍ, ທ່ານ ອຸດົມ ແກ້ວທະວົງ ຈຳນວນ 10 (ສິບ) ສ່ວນຮ້ອຍ, ແລະ ນັກທຸລະກິດສັນຊາດໄທແມ່ນ ທ່ານ ເສດ ພັດທະນາມາດ ຈຳນວນ 49 (ສີ່ສິບເກົ້າ) ສ່ວນຮ້ອຍ. ໃນໄລຍະດັ່ງກ່າວ, ທຸລະກິດປູກປາມ ເລີ່ມເປັນທີ່ຮັບຮູ້ ແລະ ມີການຕອບຮັບເປັນຢ່າງດີຈາກປະຊາຊົນ ໃນໂຄງການປູກປາມຂອງບໍລິສັດ ຊຶ່ງມີເນື້ອທີ່ສວນປາມກ່ວາ 120 (ໜຶ່ງຮ້ອຍຊາວ) ເຮັກຕາ ທີ່ບ້ານແອກຊ້າງ, ເມືອງໂພນໂຮງ, ແຂວງວຽງຈັນ.










ໂຮງໜີບປາມ



ເຄື່ອງຈັກເຜະສີມປ້ຍ

ໃນວັນທີ 12 ພະຈິກ 2014 ບໍລິສັດໄດ້ມີການປ່ຽນແປງສັດສ່ວນການຖືຮຸ້ນໃໝ່ ໂດຍທີ່ມີການຖືຄອງຮຸ້ນ ຈາກນັກທຸລະກິດລາວແມ່ນ ທ່ານ ບຸນມາ ຈັນທະວົງ ຖືຄອງຮຸ້ນຈຳນວນ 10 (ສິບ) ສ່ວນຮ້ອຍ, ທ່ານ ອຸດົມ ແກ້ວ ທະວົງ ຖືຄອງຮຸ້ນຈຳນວນ 5 (ຫ້າ) ສ່ວນຮ້ອຍ ແລະ ການຖືຄອງຮຸ້ນໂດຍນັກທຸລະກິດສັນຊາດໄທ: ທ່ານ ເສດ

ພັດທະນາມາດ ຖືຄອງຮຸ້ນຈຳນວນ 85 (ແປດສິບຫ້າ) ສ່ວນຮ້ອຍ. ໃນໄລຍະນີ້ບໍລິສັດໄດ້ມີໂຄງການ 2+3 ປູກ ປາມນ້ຳມັນ ທີ່ເມືອງໄຊຍະບູລີ.



<u>ສວນປາມເມືອງແກ້ວອຸດົມ, ແຂວງວຽງຈັນ</u>

ໃນວັນທີ 02 ມິຖຸນາ 2016 ບໍລິສັດໄດ້ເພີ່ມປະເພດການດຳເນີນທຸລະກິດໂດຍໄດ້ຮັບອະນຸຍາດຈາກ ກະຊວງອຸດສາຫະກຳ ແລະ ການຄ້າ ໃຫ້ສາມາດເປັນຜູ່ນຳເຂົ້າສິນຄ້າສຳເລັດຮູບເພື່ອມາຈຳໜ່າຍ ອີງຕາມໃບທະບຽນ ວິສະຫະກິດ ສະບັບເລກທີ 445/ຈຫວ. ຖືເປັນການເພີ່ມຊ່ອງທາງການດຳເນີນທຸລະກິດ ແລະ ສ້າງຜົນຕອບແທນ ແກ່ບໍລິສັດ ເປັນຕົ້ນແມ່ນການນຳເຂົ້ານ້ຳມັນປາມສຳເລັດຮູບ ແລະ ນ້ຳມັນ ແລະ ນ້ຳໝາກຜ້າວກະປ໋ອງ.



ບໍລິສັດໄດ້ຫັນປ່ຽນຮູບແບບເປັນ ບໍລິສັດ ມະຫາຊົນ, ໂດຍບໍລິສັດໄດ້ຮັບການ ສ້າງຕັ້ງຂຶ້ນໃນວັນທີ 17 ພຶດສະພາ ປີ 2017 ອີງຕາມໃບທະບຽນວິສາຫະກິດ ສະບັບເລກທີ 0424/ຈທວ ພາຍໃຕ້ກົດໝາຍ ຂອງ ສປປ ລາວ (ເຊິ່ງຕໍ່ໄປນີ້ ເອີ້ນວ່າ “ວັນທີປ່ຽນຮູບແບບບໍລິສັດ) ໂດຍມີ ສຳນັກງານໃຫຍ່ຕັ້ງຢູ່: ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ,ສປປ ລາວ. ໃນວັນທີປ່ຽນຮູບແບບ ບໍລິສັດ ມີທຶນຈົດທະບຽນຢູ່ທີ່ 40,000,000,000ກີບ (ສີ່ສິບຕື້) ກີບ ໂດຍການຖືຄອງຮຸ້ນທີ່ເປັນນັກທຸລະກິດລາວ 15,00000625 (ສິບຫ້າ ຈຸດສູນສູນສູນສູນສູນຫົກສອງຫ້າ)ສ່ວນຮ້ອຍ (ໃນໄລຍະດຽວກັນນັ້ນໄດ້ມີການປ່ຽນແປງຜູ້ຖືຮຸ້ນລາວ ໂດຍທ່ານ ບຸນມາ ຈັນທະວົງ ໄດ້ໂອນຮຸ້ນທີ່ຕົນຖືທັງໝົດ 10% ຂາຍໃຫ້ແກ່ ທ່ານ ນາງ ສຸກສາຄອນ ທິພະກາຫວັນ) ແລະ ນັກທຸລະກິດໄທ 84,99999375 (ແປດສິບສີ່ຈຸດເກົ້າເກົ້າເກົ້າເກົ້າເກົ້າສາມເຈັດຫ້າ) ສ່ວນຮ້ອຍ.



ບໍລິສັດໄດ້ຮັບອະນຸຍາດຈາກກະຊວງອຸດສາຫະກຳ ແລະ ການຄ້າສາມາດດຳເນີນທຸລະກິດໃນການນຳເຂົ້າຫົວເຊື້ອນ້ຳມັນເຊື້ອໄຟ ແລະ ບໍລິການຂາຍຍົກ-ຂາຍຍ່ອຍ ນ້ຳມັນເຊື້ອໄຟຊີວະພາບ ແລະ ໃຫ້ນຳເຂົ້ານ້ຳມັນການຊອນເທົ່ານັ້ນເພື່ອມາຜະລິດເປັນ ນ້ຳມັນເຊື້ອໄຟຊີວະພາບ.








LAO AGROTECH PUBLIC COMPANY
ISUZU

ເວົ້າລວມແລ້ວ, ບໍລິສັດລາວອາໂກຣເທັກແມ່ນບໍລິສັດທີ່ດຳເນີນທຸລະກິດທາງດ້ານອຸດສາຫະກຳການກະເສດແປຮູບແບບຄົບວົງຈອນ ໂດຍສຸມໃສ່ພືດທີ່ໃຫ້ນ້ຳມັນ ເຊິ່ງສາມາດແປຮູບໃຫ້ເປັນອາຫານ ແລະ ພະລັງງານໄດ້. ພືດນ້ຳມັນທີ່ບໍລິສັດໄດ້ຜັດທະນາໃຫ້ເປັນທຸລະກິດຫຼັກໄດ້ແກ່: ນ້ຳມັນປາມ ທຸລະກິດກ່ຽວພັນກັບປາມນ້ຳມັນທີ່ສາມາດສ້າງລາຍຮັບໃຫ້ກັບບໍລິສັດປະກອບມີ:

- ທຸລະກິດຜະລິດ ແລະ ຈຳໜ່າຍເມັດພັນປາມ ແລະ ຕົ້ນກ້າປາມ
- ທຸລະກິດໃຫ້ການບໍລິການປູກ, ດູແລ, ແລະ ເປັນທີ່ປຶກສາໃນການບໍລິຫານຈັດການສວນປາມ
- ທຸລະກິດຜະລິດ ແລະ ຈຳໜ່າຍນ້ຳມັນປາມດິບ
- ທຸລະກິດຜະລິດ, ນຳເຂົ້າ ແລະ ຈຳໜ່າຍນ້ຳມັນກາຊວນຊີວະພາບ
- ທຸລະກິດນຳເຂົ້າສິນຄ້າສຳເລັດຮູບເພື່ອຈຳໜ່າຍເຊັ່ນ: ນ້ຳມັນພືດ, ແປ້ງນົວ, ນ້ຳໝາກພ້າວ, ແນວພັນສາລີ.
- ຈຳໜ່າຍຜະລິດຕະພັນຝຸ່ນສຳເລັດຮູບ.



ຕາຕະລາງ ປະຫວັດຄວາມເປັນມາຂອງບໍລິສັດແຕ່ລະໄລຍະ

ປີ	ເຫດການທີ່ເກີດຂຶ້ນແຕ່ລະໄລຍະ
2008-2010	- ບໍລິສັດ ໄດ້ຮັບການສ້າງຕັ້ງຂຶ້ນ ດຳເນີນທຸລະກິດໃຫ້ບໍລິການທີ່ປຶກສາດ້ານກະສິກຳແບບຄົບວົງຈອນເຊິ່ງຄອບຄຸມນັບຕັ້ງແຕ່ການກໍ່ສ້າງຟາມ, ການກ້າເບ້ຍ ແລະ ການປູກ - ໄດ້ມີການປູກຕົ້ນແມ່ພັນ, ວິໄຈ ແລະ ຄັດສາຍພັນ (ຊຸດທຳອິດ) ທີ່ເໝາະສົມກັບສະພາບອາກາດຂອງ ສປປ ລາວ. - ຜັດທະນາແນວພັນປາມນ້ຳມັນ. - ທົດລອງປູກແນວພັນປາມນ້ຳມັນ ທີ່ບ້ານໜອງຄັນຄູ,ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ. ດ້ວຍເນື້ອທີ່ 10 (ສິບ) ເຮັກຕາ.
2011	- ສ້າງຕັ້ງໂຮງງານບັນຈຸນ້ຳມັນພືດ (ນ້ຳມັນສຳລັບປຸງແຕ່ງອາຫານ (cooking oil) ນ້ຳມັນປາມ). - ເລີ່ມຂາຍນ້ຳມັນປາມສຳລັບປຸງແຕ່ງອາຫານ (cooking oil).
2012	- ໄດ້ມີການຮ່ວມມືກັບພາກລັດຖະບານຕາງໜ້າໂດຍກະຊວງພະລັງງານ ແລະ ບໍ່ແຮ່ໃນການຜະລິດນ້ຳ ມັນກາຊວນຊີວະພາບ B5. - ໄດ້ຮັບອະນຸຍາດດຳເນີນທຸລະກິດໃນຂະແໜງອຸດສະຫະກຳປຸງແຕ່ງດ້ານຜະລິດນ້ຳມັນປາມຄົບວົງຈອນ. - ສ້າງໂຮງງານຜະລິດນ້ຳມັນກາຊວນຊີວະພາບຂະໜາດ 20,000 (ສາວພັນ) ລິດຕໍ່ມື້. - ຮັບສະໝັກສະມາຊິກຮ່ວມກັບປະຊາຊົນລາວໃນໂຄງການ 2+3 ປູກນ້ຳມັນປາມທີ່ເມືອງ ຊະນະຄາມ.
2013	- ສ້າງສວນປາມຈຳນວນ 120 (ໜຶ່ງຮ້ອຍສາວ) ເຮັກຕາ ທີ່ບ້ານແອກຊ້າງ, ເມືອງໂພນໂຮງ, ແຂວງວຽງຈັນ - ເພີ່ມພື້ນທີ່ປູກຕົ້ນພໍ່ແມ່ພັນປາມໃນເນື້ອທີ່ 10 (ສິບ) ເຮັກຕ້າ ທີ່ບ້ານໜອງຄັນຄູ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ.
2014	- ຮັບສະໝັກສະມາຊິກຮ່ວມກັບປະຊາຊົນລາວໃນໂຄງການ 2+3 ປູກປາມນ້ຳມັນ - ປູກຕົ້ນແມ່ພັນ, ວິໄຈ ແລະ ຄັດສາຍພັນ (ຊຸດທີສອງ) ທີ່ເໝາະສົມກັບສະພາບອາກາດຂອງ ສປປ ລາວ
2015	- ສ້າງໂຮງສະກັດນ້ຳມັນປາມ. - ສ້າງສວນປາມຈຳນວນ 72 (ເຈັດສິບສອງ) ເຮັກຕາ ທີ່ເມືອງ ແກ້ວອຸດົມ, ແຂວງ ວຽງຈັນ.
2016	- ຮັບຊື້ຜົນຜະລິດຈາກຊາວສວນທີ່ຮ່ວມໂຄງການ. - ສ້າງໂຮງງານຜະລິດເມັດພັນ. - ໄດ້ຮັບການອະນຸຍາດໃຫ້ນຳເຂົ້າ, ຜະລິດ, ແລະ ຈຳໜ່າຍ ນ້ຳມັນເຊື້ອໄຟຊີວະພາບຈາກລັດ ຖະບານ - ໄດ້ຮັບອະນຸຍາດນຳເຂົ້າ ສິນຄ້າສຳເລັດຮູບເພື່ອມາຈຳໜ່າຍ.
2017	- ສ້າງໂຮງງານຜະລິດຝຸ່ນ (ຄາດວ່າຈະສຳເລັດໃນຊ່ວງປີ 2018-2019) - ສ້າງສວນປາມຈຳນວນ 150 (ໜຶ່ງຮ້ອຍຫ້າສິບ) ເຮັກຕາ ທີ່ເມືອງ ຕະໂອ້ຍ, ແຂວງ ສາລະວັນ.
2018	- ຈຳໜ່າຍຜະລິດຕະພັນຝຸ່ນສຳເລັດຮູບ. - ຈຳໜ່າຍເຜັດພັນສາລີ - ນຳເຂົ້າສິນຄ້າສຳເລັດຮູບເພີ່ມເຕີມເພື່ອມາຈຳໜ່າຍເຊັ່ນ: ແປ້ງນົວກາກ້ຽງມັງກອນ


❖ ຜົນການດຳເນີນທຸລະກິດ ແລະ ຜົນການດຳເນີນງານປີ 2018

ລາຍໄດ້ລວມ (ລ້ານກີບ)




ບໍລິສັດມີລາຍໄດ້ໃນປີ 2017 ເທົ່າກັບ 55,381 ລ້ານກີບ ຊຶ່ງໃນນີ້ມີລາຍໄດ້ຈາກການການບໍລິການສອນແລະຕົ້ນກ້າປາມຈຳນວນ 5,658.67 ລ້ານກີບ, ລາຍໄດ້ຈາກການຜະລິດສິນຄ້າຈຳໜ່າຍຈຳນວນ 36,779.78 ລ້ານກີບ ແລະລາຍໄດ້ຈຳໜ່າຍສິນຄ້າສຳເລັດຮູບຈຳນວນ 12,942.00 ລ້ານກີບ ໃນປີ 2018 ບໍລິສັດມີລາຍໄດ້ລວມ 45,523.00 ລ້ານກີບຊຶ່ງໃນນີ້ມີລາຍໄດ້ຈາກການການບໍລິການສອນແລະຕົ້ນກ້າປາມຈຳນວນ 1,895.76 ລ້ານກີບ ຊຶ່ງຫຼຸດລົງຈາກປີ 2017 ໃນອັດຕາເທົ່າກັບ 66,55%, ລາຍໄດ້ ຈາກການຜະລິດສິນຄ້າຈຳໜ່າຍຈຳນວນ 39,291.50 ລ້ານກີບ ເພີ່ມຂຶ້ນຈາກປີ 2017 ໃນອັດຕາເທົ່າກັບ 6,83% ແລະ ລາຍໄດ້ຈຳໜ່າຍສິນຄ້າສຳເລັດຮູບ 4,336.02 ລ້ານກີບຫຼຸດລົງຈາກປີ 2017 ໃນອັດຕາເທົ່າກັບ 66,50% ສະຫຼຸບລວມລາຍໄດ້ປີ 2018 ຫຼຸດລົງຈາກປີ 2017 ໃນອັດຕາເທົ່າກັບ 17,80%.

ກຳໄລ - ຂາດທຶນ (ລ້ານກີບ)



ບໍລິສັດມີກຳໄລໃນປີ 2017 ເທົ່າກັບ 4,039.87 ຄິດເປັນອັດຕາເທົ່າກັບ 7,29% ເມື່ອທຽບກັບລາຍໄດ້ລວມ ແລະໃນປີ 2018 ບໍລິສັດມີກຳໄລເທົ່າກັບ 613.97 ລ້ານກີບ ຄິດເປັນອັດຕາເທົ່າກັບ 1,32% ເມື່ອທຽບກັບລາຍໄດ້ລວມ ບໍລິສັດມີກຳໄລຫຼຸດລົງເນື່ອງຈາກຍອດ ການຈຳໜ່າຍສິນຄ້າ ຫຼຸດລົງ.

ສິນຊັບລວມ (ລ້ານກີບ)



ວັນທີ 31 ທັນວາ 2017 ບໍລິສັດມີສິນຊັບລວມເທົ່າກັບ 58,451.52 ລ້ານກີບ ແລະ ວັນທີ 31 ທັນວາ 2018 ບໍລິສັດມີສິນຊັບລວມ ເທົ່າກັບ 69,754.35 ລ້ານກີບຊຶ່ງເພີ່ມຂຶ້ນຈາກປີ 2017 ໃນອັດຕາເທົ່າກັບ 19,34% ເມື່ອທຽບກັບສິນຊັບລວມ ບໍລິສັດມີການລົງທຶນໃນ ທີ່ດິນ, ອາຄານໂຮງງານ, ທັງໃນເຂດພື້ນທີ່ ສວນເມືອງນາຊາຍທອງ, ສວນສາລະວັນ ແລະ ສວນແອ໊ດຊ້າງ.

ໜີ້ສິນລວມ (ລ້ານກີບ)



ວັນທີ 31 ທັນວາ 2017 ບໍລິສັດມີໜີ້ສິນລວມ ເທົ່າກັບ 12,593.24 ລ້ານກີບ ແລະ ວັນທີ 31 ທັນວາ 2018 ບໍລິສັດມີໜີ້ສິນລວມເທົ່າກັບ 10,012.63 ລ້ານກີບຊຶ່ງລົດລົງຈາກປີ 2017 ໃນອັດຕາເທົ່າກັບ 20,49% ເມື່ອທຽບກັບໜີ້ສິນລວມຊຶ່ງໜີ້ສ່ວນໃຫຍ່ຂອງ ບໍລິສັດ ເປັນເຈົ້າໜີ້ການຄ້າ.

ສ່ວນຂອງຜູ້ຖືຮຸ້ນລວມ (ລ້ານກີບ)



ວັນທີ 31 ທັນວາ 2017 ບໍລິສັດມີສ່ວນຂອງຜູ້ຖືຮຸ້ນລວມ ເທົ່າກັບ 45,585.28 ລ້ານກີບ ແລະ ວັນທີ 31 ທັນວາ 2018 ບໍລິສັດມີສ່ວນຂອງຜູ້ຖືຮຸ້ນລວມ ເທົ່າກັບ 59,471.72 ລ້ານກີບ ຊຶ່ງເພີ່ມຂຶ້ນຈາກປີ 2017 ໃນອັດຕາ ເທົ່າກັບ 31,04% ເມື່ອທຽບກັບສ່ວນຂອງຜູ້ຖືຮຸ້ນລວມ ທັງ ນີ້ເນື່ອງຈາກບໍລິສັດມີການຈຳໜ່າຍຮຸ້ນເພີ່ມທຶນເມື່ອວັນທີ 17 ສິງຫາ 2018 ຈຳນວນ 20,000,000 ຮຸ້ນ

ກະແສເງິນສົດລວມ (ລ້ານກີບ)



ວັນທີ 31 ທັນວາ 2017 ບໍລິສັດມີກະແສເງິນສົດ ໃນມືເທົ່າກັບ 3,572.46 ລ້ານກີບໃນນີ້ມີກະແສເງິນສົດເຂົ້າ ຈາກການດຳເນີນງານ ເທົ່າກັບ 5,811.17 ລ້ານກີບ ມີ ກະແສເງິນສົດອອກຈາກການກິດຈະກຳການລົງທຶນ ເທົ່າກັບ (3,621.72 ລ້ານກີບ) ແລະ ວັນທີ 31 ທັນວາ 2018 ບໍລິສັດມີເງິນສົດໃນມືເທົ່າກັບ 4,823.43 ລ້ານກີບໃນນີ້ມີ ກະແສເງິນສົດອອກຈາກການດຳເນີນງານ ເທົ່າກັບ (6,524.50 ລ້ານກີບ) ມີກະແສເງິນສົດອອກຈາກກິດຈະກຳການລົງທຶນ ເທົ່າກັບ (5,951.75 ລ້ານກີບ) ແລະມີກະແສເງິນສົດເຂົ້າຈາກການກິດຈະກຳການເງິນ ເທົ່າກັບ 13,696.14 ລ້ານກີບ.